# ບົດລາຍງານສະຖິຕິເງິນຕາ
## ປະຈຳໄຕມາດ ທີ 1 ປີ 2022

ທະນາຄານແຫ່ງ ສປປ ລາວ

# ສາລະບານ


I. ສະພາບລວມ ....... 1

II. ອັດຕາເງິນເຟີ້ ....... 1

III. ຂະແໜງເງິນຕາ-ການເງິນ ....... 2

3.1. ນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ....... 2

3.2. ຖານເງິນຕາ ....... 3

3.3. ປະລິມານເງິນ ....... 3

3.4. ອັດຕາດອກເບ້ຍ ....... 4

3.5. ເງິນຝາກ ....... 5

3.6. ສິນເຊື່ອ ....... 5

3.7. ລະບົບສະຖາບັນການເງິນ-ເງິນຕາ ....... 6

IV. ດຸນການຊຳລະກັບຕ່າງປະເທດ ....... 7

4.1. ດຸນການຊໍາລະລວມ ....... 7

4.2. ດຸນບັນຊີຊໍາລະປົກກະຕິ ....... 7

4.2.1 ດຸນການຄ້າດ້ານສິນຄ້າ ....... 8

4.3. ດຸນບັນຊີການເງິນ ....... 10

# ສາລະບານຮູບ

ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 2
ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ........ 2
ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (−) ອ່ອນຄ່າ........ 3
ຮູບທີ 4. ໂຄງປະກອບຂອງຖານເງິນຕາ........ 3
ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2........ 4
ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ........ 5
ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ........ 5
ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ ........ 6
ຮູບທີ 9. ດຸນການຊຳລະກັບຕ່າງປະເທດ ........ 7
ຮູບທີ 10. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ........ 8
ຮູບທີ 11. ການສົ່ງອອກສິນຄ້າ ........ 9
ຮູບທີ 12. ການນຳເຂົ້າສິນຄ້າ ........ 9
ຮູບທີ 13. ດຸນບັນຊີການເງິນ........ 10

# ສາລະບານຕາຕະລາງ

ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index) ........ 11
ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate) ........ 12
ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL) ........ 13
ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey) ........ 14
ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey) ........ 15
ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks) ........ 16
ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate) ........ 17
ຕາຕະລາງທີ 8. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ (Commercial Bank' Interest Rate) ........ 18
ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (Commercial Bank' Deposit) ........ 19
ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Deposit by Bank Group) ........ 20
ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (Commercial Bank' Credit) ........ 21
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Credit by Bank Group) ........ 22
ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (Balance Of Payments) ........ 23
ຕາຕະລາງທີ 14. ການຄ້າຕ່າງປະເທດ (Foreign Trade) ........ 25
ຕາຕະລາງທີ 15. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ (List of Commercial Banks) ........ 26

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

# I. ສະພາບລວມ

ໃນໄຕມາດ 1 ຂອງປີ 2022, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດໍາເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນໍາໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 3% ສໍາລັບສະກຸນເງິນກີບ ແລະ 5% ສໍາລັບສະກຸນເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ດ້ວຍການກໍານົດອັດຕາແລກປ່ຽນອ້າງອີງປະຈໍາວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ; ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນ, ອັດຕາເງິນເຟີ້ ຢູ່ໃນລະດັບ 7,37%, ອັດຕາແລກປ່ຽນເງິນກີບທຽບເງິນໂດລາສະຫະລັດ ອ່ອນຄ່າ 4,43%; ປະລິມານເງິນ (M2) ເພີ່ມຂຶ້ນ 6,31%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 7,44%; ສິນເຊື່ອຂອງທະນາຄານທຸລະກິດ ເພີ່ມຂຶ້ນ 7,21%; ຄັງສໍາຮອງເງິນຕາຕ່າງປະເທດສາມາດກຸ້ມການນໍາເຂົ້າໄດ້ 3,61 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມີມູນຄ່າການຄ້າທັງໝົດ 3.866,66 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ການສົ່ງອອກ ມີມູນຄ່າ 2.153,50 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 14,72% ແລະ ການນໍາເຂົ້າ ມີມູນຄ່າ 1.713,16 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 9,38% ທຽບໃສ່ໄຕມາດຜ່ານມາ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 1 ຂອງປີ 2022 ຢູ່ໃນລະດັບ 7,37% ເພີ່ມຂຶ້ນຈາກລະດັບ 5,01% ໃນໄຕມາດ 4/2021. ປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ ເມື່ອທຽບກັບໄຕມາດຜ່ານມາ ແມ່ນຍ້ອນການເພີ່ມຂຶ້ນຂອງລາຄາສິນຄ້າ (ທຽບກັບໄລຍະດຽວກັນຂອງປີຜ່ານມາ) ໃນໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ເພີ່ມຂຶ້ນຢູ່ໃນລະດັບ 5,25% ຈາກ 2,74% ເປັນຕົ້ນ ລາຄາເຂົ້າສານ, ຊີ້ນໝູ ແລະ ຜັກສົດ ບວກກັບໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນຢູ່ໃນລະດັບ 16,05% ຈາກ 11,78%, ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ ຢູ່ໃນລະດັບ 6,60% ຈາກ 4,67%, ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ຢູ່ໃນລະດັບ 6,60% ຈາກ 5,21%, ໝວດຮ້ານອາຫານ ແລະ ໂຮງແຮມ ຢູ່ໃນລະດັບ 8,87% ຈາກ 7,56% ແລະ ໝວດສິນຄ້າ ແລະ ບໍລິການອື່ນໆ ຢູ່ໃນລະດັບ 10,33% ຈາກ 7,84%.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ໃນໄຕມາດ 1 ຂອງປີ 2022, ທຫລ ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 3% ສຳລັບສະກຸນເງິນກີບ ແລະ 5% ສຳລັບສະກຸນເງິນຕາຕ່າງປະເທດ; ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ.

ສຳລັບນະໂຍບາຍອັດຕາແລກປ່ຽນ, ທຫລ ໄດ້ສືບຕໍ່ຮັກສາຂອບການເໜັງຕີງອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃນລະດັບ ±1,50% ທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ, ສືບຕໍ່ຮັກສາສ່ວນຕ່າງລະຫວ່າງອັດຕາຊື້-ຂາຍສຳລັບເງິນກີບທຽບກັບເງິນໂດລາສະຫະລັດ ບໍ່ເກີນ 0,50%, ເງິນກີບທຽບກັບເງິນບາດ ແລະ ກີບທຽບກັບເງິນເອີໂຣ ບໍ່ເກີນ 0,75% ແລະ 2% ສຳລັບເງິນຕາສະກຸນອື່ນໆ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວນັ້ນ, ອັດຕາແລກປ່ຽນມີການເໜັງຕີງຄື: ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບສະເລ່ຍຢູ່ໃນລະດັບ 11.666,32 ກີບ/ໂດລາສະຫະລັດ ແລະ 357,87 ກີບ/ບາດ. ໃນນີ້, ເງິນກີບອ່ອນຄ່າ 4,43% ທຽບເງິນໂດລາສະຫະລັດ ແລະ ອ່ອນຄ່າ 2,20% ທຽບກັບເງິນບາດ.

**ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 1 ຂອງປີ 2022, ຖານເງິນຕາ ມີຍອດເຫຼືອ 41.779,18 ຕື້ກີບ, ເພີ່ມຂຶ້ນ 4,42% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 23,90% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນລັດຖະບານໃຊ້ຈ່າຍງົບປະມານ ແລະ ທະນາຄານທຸລະກິດໄຖ່ຖອນພັນທະບັດ ທຫລ ຄືນກຳນົດ.

**ຮູບທີ 4. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ມີຍອດທັງໝົດ 147.479,46 ຕື້ກີບ, ເພີ່ມຂຶ້ນ 6,31% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 29,13% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນທະນາຄານທຸລະກິດປ່ອຍສິນເຊື່ອໃຫ້ພາກສ່ວນເສດຖະກິດ.

ອົງປະກອບຂອງປະລິມານເງິນ (M2) ປະກອບມີ: ເງິນຝາກເປັນສະກຸນເງິນກີບ ກວມເອົາ 36,78%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ກວມເອົາ 56,61% ແລະ ເງິນຢູ່ນອກລະບົບທະນາຄານ ກວມເອົາ 6,61%.

**ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ມີການປ່ຽນແປງເລັກໜ້ອຍ. ໃນນີ້, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ໄດ້ເພີ່ມຂຶ້ນຈາກ 5,29% ມາເປັນ 5,30%, ແຕ່ສະກຸນເງິນບາດ ຫຼຸດລົງຈາກ 3,38% ມາເປັນ 3,35%. ສ່ວນສະກຸນເງິນໂດລາສະຫະລັດ ແມ່ນຄົງທີ່ຢູ່ໃນລະດັບ 3,71%. ພ້ອມດຽວກັນນັ້ນ, ອັດຕາດອກເບ້ຍເງິນກູ້ຂອງທະນາຄານທຸລະກິດ ໄລຍະເວລາ 1 ປີ ສະກຸນເງິນກີບ ຫຼຸດລົງຈາກ 9,83% ມາເປັນ 9,69%, ແຕ່ສະກຸນເງິນບາດ ເພີ່ມຂຶ້ນຈາກ 8,35% ມາເປັນ 8,38%. ສ່ວນສະກຸນເງິນໂດລາສະຫະລັດ ແມ່ນຄົງທີ່ຢູ່ໃນລະດັບ 8,06%.

**ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) ຮອດທ້າຍໄຕມາດ 1 ຂອງປີ 2022 ມີຍອດທັງໝົດ 137.681,75 ຕື້ກີບ, ເພີ່ມຂຶ້ນ 7,44% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 30,61% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 2,73%, ກວມເອົາ 39,36% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 10,73%, ກວມເອົາ 60,64% ຂອງເງິນຝາກທັງໝົດ.

**ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.6. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດທ້າຍໄຕມາດ 1 ຂອງປີ 2022 ມີຍອດທັງໝົດ 93.590,78 ຕື້ກີບ, ຂະຫຍາຍຕົວເພີ່ມຂຶ້ນ 7,21% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 21,63% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນັ້ນ, ສິນເຊື່ອທີ່ສະໜອງໃຫ້ຂະແໜງອຸດສາຫະກຳ ຂະຫຍາຍຕົວ 10,40%, ຂະແໜງສະໜອງວັດຖຸ ແລະ ເຕັກນິກ 10,35%, ຂະແໜງການຄ້າ 8,41%, ຂະແໜງການກໍ່ສ້າງ 7,91%, ຂະແໜງການບໍລິການ 6,85%,

ຂະແໜງຂົນສົ່ງ 4,16% ແລະ ຂະແໜງການອື່ນໆ 13,54%. ໃນຂະນະທີ່, ສິນເຊື່ອບາງຂະແໜງການຂະຫຍາຍຕົວຫຼຸດລົງ ເປັນຕົ້ນແມ່ນ ຂະແໜງຫັດຖະກຳ 85,01% ແລະ ຂະແໜງກະສິກຳ 3,52%. ໃນໄຕມາດນີ້, ສິນເຊື່ອ (ແຍກຕາມຂະແໜງການ) ທີ່ປະກອບສ່ວນຕໍ່ການຂະຫຍາຍຕົວຂອງສິນເຊື່ອທັງໝົດ ປະກອບມີ: ຂະແໜງອຸດສາຫະກຳ 2,79%, ຂະແໜງການຄ້າ 1,60%, ຂະແໜງກໍ່ສ້າງ 1,08%, ຂະແໜງບໍລິການ 1,00% ແລະ ຂະແໜງການອື່ນໆ[1] 0,74%.

**ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.7. ລະບົບສະຖາບັນການເງິນ-ເງິນຕາ

ຮອດທ້າຍໄຕມາດ 1 ຂອງປີ 2022, ລະບົບສະຖາບັນການເງິນ-ເງິນຕາ ປະກອບມີທະນາຄານທຸລະກິດ ຈຳນວນ 44 ແຫ່ງ (ຕາຕະລາງທີ 15), ມີ 114 ສາຂາຂອງທະນາຄານທຸລະກິດ, 542 ໜ່ວຍບໍລິການ, 34 ໜ່ວຍແລກປ່ຽນເງິນຕາ, ຕູ້ ATM 1.426 ໜ່ວຍ, ເຄື່ອງຮູດບັດ EDC ຈຳນວນ 4.565 ເຄື່ອງ ຢູ່ໃນຂອບເຂດທົ່ວປະເທດ ແລະ ບັດ ATM ຈຳນວນ 2.156.659 ບັດ. ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 222.821,50 ຕື້ກີບ, ເພີ່ມຂຶ້ນ 6,85%; ຍອດເງິນຝາກທັງໝົດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) 137.681,75 ຕື້ກີບ, ເພີ່ມຂຶ້ນ 7,44%. ນອກຈາກນີ້, ທະນາຄານທຸລະກິດໄດ້ປະກອບສ່ວນຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ຊຶ່ງສິນເຊື່ອໃຫ້ພາກສ່ວນເສດຖະກິດ ມີຍອດທັງໝົດ 76.948,82 ຕື້ກີບ, ເພີ່ມຂຶ້ນ 7,21%. ສຳລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 225 ແຫ່ງ, ເພີ່ມຂຶ້ນ 8 ແຫ່ງ. ໃນນັ້ນ, ມີສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 99 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 35 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 28 ແຫ່ງ ແລະ ໂຮງຊວດຈຳ 43 ແຫ່ງ.

ສຳລັບວຽກງານຕະຫຼາດຫຼັກຊັບ, ຮອດທ້າຍໄຕມາດທີ 1 ຂອງປີ 2022, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ມີທັງໝົດ ຈຳນວນ 11 ບໍລິສັດ. ຊຶ່ງດັດຊະນີຕະຫຼາດຫຼັກຊັບລາວໃນໄຕມາດນີ້ ປິດຢູ່ທີ່ 616,63 ຈຸດ, ເພີ່ມຂຶ້ນ 4,37% ທຽບໃສ່ໄຕມາດຜ່ານມາ. ໃນນີ້, ມີປະລິມານການຊື້-ຂາຍຮຸ້ນທັງໝົດ 2,01 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍທັງໝົດ 7,34 ຕື້ກີບ, ຫຼຸດລົງ 40,99% ທຽບໃສ່ໄຕມາດຜ່ານມາ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງ

[1] ຂະແໜງການອື່ນໆປະກອບມີ: ຂະແໜງກະສິກຳ, ຂະແໜງຂົນສົ່ງ, ຂະແໜງສະໜອງວັດຖຸ ແລະ ເຕັກນິກ, ຂະແໜງຫັດຖະກຳ ແລະ ຂະແໜງອື່ນໆ.

ນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 40,7% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ. ສາເຫດທີ່ມູນຄ່າຊື້-ຂາຍຮຸ້ນທັງໝົດຫຼຸດລົງຫຼາຍໃນໄຕມາດນີ້ ຕົ້ນຕໍແມ່ນມາຈາກການຫຼຸດລົງຂອງການຊື້-ຂາຍຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ພ້ອມດຽວກັນນີ້, ນັກລົງທຶນຕ່າງປະເທດທີ່ເປັນຜູ້ຊື້-ຂາຍຫຼັກໃນຕະຫຼາດໃນໄລຍະຜ່ານມາ ກໍຖອນຕົວອອກຈາກການຊື້-ຂາຍຮຸ້ນ ຈຳນວນຫຼາຍ ເຮັດໃຫ້ການຊື້-ຂາຍຫຼຸດລົງຫຼາຍໃນໄຕມາດນີ້.

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ດຸນຊຳລະກັບຕ່າງປະເທດ ປະຈຳໄຕມາດ 1 ຂອງປີ 2022, ດຸນລວມ ເກີນດຸນ 27,60 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ດຸນບັນຊີຊຳລະປົກກະຕິ ເກີນດຸນ 157,95 ລ້ານໂດລາສະຫະລັດທຽບເທົ່າ. ສ່ວນດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າສຸດທິ 53,51 ລ້ານໂດລາສະຫະລັດທຽບເທົ່າ. ຮອດທ້າຍໄຕມາດ 1 ຂອງປີ 2022, ຄັງສຳຮອງເງິນຕາຕ່າງປະເທດ ມີຍອດເຫຼືອ 1.290,11 ລ້ານໂດລາສະຫະລັດ ແລະ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 3,61 ເດືອນ[2].

**ຮູບທີ 9. ດຸນການຊຳລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິ ເກີນດຸນຢູ່ໃນລະດັບ 157,95 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 65,98 ລ້ານໂດລາສະຫະລັດທຽບເທົ່າ ຫຼື ເພີ່ມຂຶ້ນ 71,75% ທຽບໃສ່ໄຕມາດຜ່ານມາ. ສາເຫດຕົ້ນຕໍຍ້ອນດຸນການຄ້າດ້ານສິນຄ້າ ທີ່ເປັນດຸນຫຼັກໃນດຸນບັນຊີຊຳລະປົກກະຕິ ເກີນດຸນໃນລະດັບສູງ ຈາກຂາດດຸນໃນໄຕມາດຜ່ານມາ, ເຖິງແມ່ນວ່າດຸນອື່ນໆ ຈະຂາດດຸນ ແລະ ເພີ່ມຂຶ້ນໜ້ອຍກວ່າໄຕມາດຜ່ານມາກໍຕາມ.

---

[2] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນໃນປີ 2022 ແມ່ນນຳໃຊ້ 357,14 ລ້ານໂດລາສະຫະລັດ (ຕົວເລກຄາດຄະເນ) ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ. ໃນນັ້ນ, ລວມມີສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມລົງທຶນ ແລະ ອື່ນໆ.

**ຮູບທີ 10. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າດ້ານສິນຄ້າ

ດຸນການຄ້າດ້ານສິນຄ້າ ເກີນດຸນຢູ່ໃນລະດັບ 440,33 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 129,32 ລ້ານໂດລາສະຫະລັດທຽບເທົ່າ ຫຼື ເພີ່ມຂຶ້ນ 41,58% ທຽບໃສ່ໄຕມາດຜ່ານມາ. ສາເຫດຍ້ອນການສົ່ງອອກສິນຄ້າ ເພີ່ມຂຶ້ນ 14,72% ຈາກຫຼຸດລົງ 3,19% ໃນໄຕມາດຜ່ານມາ ບວກກັບການນໍາເຂົ້າສິນຄ້າ ເພີ່ມຂຶ້ນພຽງເລັກນ້ອຍ ທຽບກັບໄຕມາດຜ່ານມາ ຈາກ 8,98% ມາເປັນ 9,38%.

**ການສົ່ງອອກສິນຄ້າ:** ມີມູນຄ່າ 2.153,50 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 14,72% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 5,76% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການສົ່ງອອກຜະລິດຕະພັນບໍ່ແຮ່; ຜະລິດຕະພັນກະສິກໍາ; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ; ຜະລິດຕະພັນອື່ນໆ; ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ແລະ ຜະລິດຕະພັນຕັດຫຍິບ ແລະ ເຄື່ອງຫັດຖະກໍາ. ສິນຄ້າສົ່ງອອກຫຼັກໃນໄຕມາດນີ້ປະກອບມີ: ຜະລິດຕະພັນບໍ່ແຮ່ ກວມເອົາ 25,63%; ຮອງລົງມາແມ່ນກະແສໄຟຟ້າ ກວມເອົາ 21,26%; ຜະລິດຕະພັນກະສິກໍາ ກວມເອົາ 19,37%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 10,72%; ຜະລິດຕະພັນອື່ນໆ ກວມເອົາ 6,83%; ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 5,83 %; ຜະລິດຕະພັນພຣາສະຕິກ ແລະ ຢາງພາລາ ກວມເອົາ 3,62% ແລະ ຜະລິດຕະພັນຕັດຫຍິບ ແລະ ເຄື່ອງຫັດຖະກໍາ ກວມເອົາ 3,04% ຂອງການສົ່ງອອກທັງໝົດ.

**ຮູບທີ 11. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການນຳເຂົ້າສິນຄ້າ:** ມີມູນຄ່າ 1.713,16 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 9,38% ທຽບໃສ່ໄຕມາດຜ່ານມາ, ແຕ່ຫຼຸດລົງ 0,47% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການນຳເຂົ້າເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການນຳເຂົ້ານ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ; ຜະລິດຕະພັນອື່ນໆ; ອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ; ເຄື່ອງຈັກ ແລະ ອຸປະກອນ; ຄຳ, ທອງແດງ ແລະ ໂລຫະມີຄ່າອື່ນໆ; ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ແລະ ຜະລິດຕະພັນພຣາສະຕິກ ແລະ ຢາງພາລາ. ສິນຄ້ານຳເຂົ້າຫຼັກໃນໄຕມາດນີ້ ໄດ້ແກ່: ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ ກວມເອົາ 17,42%; ຮອງລົງມາແມ່ນອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 15,47%; ຜະລິດຕະພັນອື່ນໆ ກວມເອົາ 12,56%; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 10,23%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 8,00%; ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 6,87% ແລະ ຄຳ, ທອງແດງ ແລະ ໂລຫະມີຄ່າອື່ນໆ ກວມເອົາ 6,12% ຂອງການນຳເຂົ້າທັງໝົດ.

**ຮູບທີ 12. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າສຸດທິ 53,51 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 38,43% ທຽບໃສ່ໄຕມາດຜ່ານມາ ຈາກທີ່ມີກະແສເງິນໄຫຼເຂົ້າສຸດທິ 86,91 ລ້ານໂດລາສະຫະລັດທຽບເທົ່າ. ສາເຫດຕົ້ນຕໍທີ່ເຮັດໃຫ້ດຸນບັນຊີການເງິນຫຼຸດລົງ ແມ່ນຍ້ອນການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼເຂົ້າສຸດທິ 7,17 ລ້ານໂດລາສະຫະລັດທຽບເທົ່າ ຈາກທີ່ມີກະແສເງິນໄຫຼອອກສຸດທິ 225,49 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ມີກະແສເງິນໄຫຼເຂົ້າສຸດທິ 148,07 ລ້ານໂດລາສະຫະລັດທຽບເທົ່າ, ຊຶ່ງຫຼຸດລົງ 28,84% ຈາກທີ່ມີກະແສເງິນໄຫຼເຂົ້າສຸດທິ 208,09 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ. ການຫຼຸດລົງດັ່ງກ່າວຕົ້ນຕໍແມ່ນມາຈາກການຫຼຸດລົງຂອງການລົງທຶນໃນຂະແໜງໄຟຟ້າ. ຊຶ່ງໃນໄຕມາດນີ້, ຂະແໜງທີ່ກວມອັດຕາສ່ວນການລົງທຶນຫຼາຍກວ່າໝູ່ ຕົ້ນຕໍແມ່ນຂະແໜງການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ ກວມເອົາ 43,18% ແລະ ຂະແໜງການກໍ່ສ້າງ ກວມເອົາ 28,52% ຂອງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ. ສໍາລັບປະເທດທີ່ມາລົງທຶນຫຼາຍທີ່ສຸດແມ່ນ ສປ. ຈີນ ກວມເອົາ 46,26%, ຮອງລົງມາແມ່ນໄທ ກວມເອົາ 24,29%, ອັງກິດ 6,75%, ຫວຽດນາມ 6,30%, ກໍາປູເຈຍ 4,65% ແລະ ຍີ່ປຸ່ນ 4,46%.

**ຮູບທີ 13. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index)

| ໝວດສິນຄ້າ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ** | **114,02** | **116,37** | **119,18** | **120,16** | **122,42** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ** | **113,74** | **116,00** | **118,78** | **119,42** | **121,17** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **111,20** | **112,31** | **115,19** | **118,10** | **121,69** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ** | **110,35** | **111,21** | **113,87** | **116,23** | **118,88** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 117,60 | 121,46 | 124,35 | 123,04 | 123,77 |
| 2. ໝວດເຫຼົ້າ ແລະ ຢາສູບ | 108,33 | 110,37 | 111,67 | 113,35 | 115,89 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 120,35 | 120,30 | 122,48 | 124,93 | 128,30 |
| 4. ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 106,50 | 107,33 | 109,21 | 111,21 | 113,53 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 112,61 | 113,01 | 115,05 | 116,92 | 119,00 |
| 6. ໝວດການຮັກສາສຸຂະພາບ | 110,95 | 111,08 | 114,02 | 118,72 | 121,53 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 113,12 | 114,29 | 118,26 | 124,22 | 131,28 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 111,64 | 112,31 | 112,86 | 113,30 | 114,28 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 105,07 | 104,96 | 105,53 | 106,19 | 106,85 |
| 10. ໝວດການສຶກສາ | 103,25 | 103,24 | 103,82 | 103,31 | 103,32 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 104,72 | 107,39 | 110,68 | 112,11 | 114,02 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 121,20 | 122,30 | 127,35 | 129,59 | 133,72 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ທຽບຖານເດືອນ 12/2015 = 100

# ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate)

| ໝວດສິນຄ້າ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| **ເງິນເຟີ້ລວມ** | **2,16** | **3,58** | **4,22** | **5,01** | **7,37** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ** | **2,22** | **3,19** | **3,92** | **4,42** | **6,53** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **1,91** | **3,90** | **5,13** | **7,28** | **9,43** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ ແລະ ອາຫານສົດ** | **1,88** | **3,10** | **4,39** | **6,02** | **7,73** |
| ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ (%) | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 2,58 | 3,27 | 3,43 | 2,74 | 5,25 |
| 2. ໝວດເຫຼົ້າ ແລະ ຢາສູບ | 2,00 | 4,45 | 5,31 | 6,06 | 6,98 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 3,59 | 3,21 | 3,96 | 4,67 | 6,60 |
| 4. ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 1,00 | 2,37 | 3,52 | 5,21 | 6,60 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 3,23 | 3,14 | 3,94 | 4,80 | 5,67 |
| 6. ໝວດການຮັກສາສຸຂະພາບ | 3,79 | 1,93 | 3,54 | 7,45 | 9,54 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 2,01 | 5,06 | 6,80 | 11,78 | 16,05 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 2,39 | 8,94 | 3,57 | 2,31 | 2,37 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 0,89 | 1,03 | 1,23 | 1,55 | 1,69 |
| 10. ໝວດການສຶກສາ | -0,04 | 1,59 | 0,87 | -0,30 | 0,06 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | -2,28 | 1,89 | 5,59 | 7,56 | 8,87 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 8,58 | 8,18 | 7,76 | 7,84 | 10,33 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.
**ໝາຍເຫດ:** ທຽບຖານເດືອນ 12/2015 = 100

# ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **11.118,55** | **10.383,96** | **9.844,50** | **11.796,28** | **12.719,02** |
| ຊັບສິນຕ່າງປະເທດ | 11.801,42 | 11.077,27 | 11.961,86 | 14.145,16 | 15.147,21 |
| ໜີ້ສິນຕ່າງປະເທດ | -682,87 | -693,31 | -2.117,36 | -2.348,88 | -2.428,19 |
| **ຊັບສິນພາຍໃນສຸດທິ** | **22.601,61** | **23.882,67** | **25.046,10** | **28.214,28** | **29.060,15** |
| **ສິນເຊື່ອພາຍໃນສຸດທິ** | **17.429,34** | **18.683,93** | **19.834,23** | **23.345,78** | **22.944,69** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 968,98 | 1.152,84 | 1.211,72 | 3.129,46 | 2.953,31 |
| ສິນເຊື່ອໃຫ້ລັດຖະບານ | 2.413,29 | 2.271,37 | 2.735,42 | 5.025,96 | 5.450,06 |
| ເງິນຝາກລັດຖະບານ | -1.444,31 | -1.118,53 | -1.523,70 | -1.896,50 | -2.496,74 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.285,73 | 6.308,88 | 6.478,29 | 6.907,50 | 6.608,50 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.285,73 | 6.308,88 | 6.478,29 | 6.907,50 | 6.608,50 |
| ສິນເຊື່ອໃຫ້ສະຖາບັນການເງິນ | 10.174,63 | 11.222,21 | 12.144,22 | 13.308,82 | 13.382,88 |
| ພັນທະບັດທະນາຄານກາງ | -1.655,11 | -1.668,83 | -1.753,97 | -2.250,96 | -1.871,60 |
| ລາຍການອື່ນໆສຸດທິ | 6.827,38 | 6.867,58 | 6.965,84 | 7.119,46 | 7.987,06 |
| **ຖານເງິນຕາ** | **33.720,17** | **34.266,63** | **34.890,60** | **40.010,56** | **41.779,18** |
| ເງິນສົດຢູ່ນອກຈໍລະຈອນ | 12.110,77 | 11.551,69 | 11.936,99 | 13.386,49 | 12.970,61 |
| ເງິນຝາກ | 21.609,40 | 22.714,94 | 22.953,61 | 26.624,07 | 28.808,57 |
| ເງິນຝາກກະແສລາຍວັນ | 16.939,00 | 19.628,85 | 19.585,66 | 22.607,01 | 24.479,98 |
| ເງິນແຮຝາກບັງຄັບ | 4.363,73 | 2.752,00 | 2.881,72 | 3.420,32 | 3.550,58 |
| ທຶນຈົດທະບຽນຂອງ ທທກ | 252,15 | 242,50 | 407,59 | 512,10 | 733,75 |
| ເງິນຝາກຂອງພາກສ່ວນອື່ນໆ | 54,52 | 91,59 | 78,64 | 84,64 | 44,26 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-10.979,41** | **-11.421,40** | **-7.354,95** | **-7.354,80** | **-6.757,14** |
| ຊັບສິນຕ່າງປະເທດ | 18.306,62 | 18.957,89 | 23.232,45 | 23.609,84 | 24.367,66 |
| ໜີ້ສິນຕ່າງປະເທດ | -29.286,03 | -30.379,29 | -30.587,41 | -30.964,64 | -31.124,80 |
| **ຄັງສະສົມສຸດທິ** | **38.832,39** | **39.831,71** | **40.121,21** | **45.849,94** | **48.863,71** |
| ຄັງສະສົມ | 45.520,31 | 46.758,17 | 47.303,75 | 53.396,44 | 56.769,25 |
| ເງິນກູ້ຢືມຈາກ ທຫລ | -6.687,92 | -6.926,47 | -7.182,54 | -7.546,50 | -7.905,54 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | **5.973,65** | 7.655,85 | 9.363,89 | 16.376,72 | 13.698,11 |
| ເປັນສະກຸນເງິນກີບ | 6.743,11 | 8.236,77 | 10.187,77 | 17.708,34 | 14.992,77 |
| ເປັນສະກຸນເງິນຕາຕ່າງປະເທດ | -769,46 | -580,91 | -823,87 | -1.331,62 | -1.294,66 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **71.585,64** | **73.563,64** | **75.811,19** | **73.278,07** | **81.877,08** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 76.948,82 | 78.272,81 | 80.506,90 | 87.298,64 | 93.590,78 |
| ເປັນສະກຸນເງິນຕາຕ່າງປະເທດ | 39.015,90 | 39.461,80 | 41.756,82 | 45.397,87 | 50.607,41 |
| ສິນເຊື່ອໃຫ້ພາກເອກະຊົນ | 71.291,31 | 72.399,89 | 74.558,97 | 79.963,20 | 85.733,12 |
| ເປັນສະກຸນເງິນຕາຕ່າງປະເທດ | 33.813,76 | 34.060,30 | 36.264,79 | 39.122,63 | 44.043,68 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 5.657,51 | 5.872,92 | 5.947,93 | 7.335,43 | 7.857,65 |
| ເປັນສະກຸນເງິນຕາຕ່າງປະເທດ | 5.202,14 | 5.401,50 | 5.492,03 | 6.275,24 | 6.563,73 |
| **ຊັບສິນອື່ນໆສຸດທິ** | **-5.363,17** | **-4.709,17** | **-4.695,71** | **-14.020,57** | **-11.713,70** |
| **ເງິນຝາກລູກຄ້າ** | **105.412,26** | **109.629,80** | **117.941,33** | **128.149,93** | **137.681,75** |
| ເປັນເງິນກີບ | 46.587,92 | 48.847,64 | 50.680,67 | 52.754,54 | 54.194,80 |
| ເປັນສະກຸນເງິນຕາຕ່າງປະເທດ | 58.824,34 | 60.782,17 | 67.260,66 | 75.395,39 | 83.486,95 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **139,13** | **-1.037,44** | **2.489,54** | **4.441,48** | **5.961,87** |
| ຊັບສິນຕ່າງປະເທດ | 30.108,03 | 30.035,16 | 35.194,31 | 37.755,01 | 39.514,87 |
| ໜີ້ສິນຕ່າງປະເທດ | -29.968,90 | -31.072,60 | -32.704,77 | -33.313,52 | -33.552,99 |
| **ຊັບສິນພາຍໃນສຸດທິ** | **114.071,65** | **119.086,09** | **124.463,16** | **134.282,81** | **141.517,57** |
| **ສິນເຊື່ອພາຍໃນ** | **90.177,18** | **93.390,38** | **97.560,80** | **113.712,31** | **116.850,70** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 6.942,63 | 8.808,69 | 10.575,61 | 19.506,18 | 16.651,42 |
| ສິນເຊື່ອໃຫ້ລັດຖະບານ | 11.819,08 | 12.821,25 | 14.823,34 | 25.026,42 | 23.726,00 |
| ເງິນຝາກລັດຖະບານ | -4.876,45 | -4.012,55 | -4.247,73 | -5.520,25 | -7.074,58 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 83.234,55 | 84.581,69 | 86.985,19 | 94.206,14 | 100.199,28 |
| ສິນເຊື່ອໃຫ້ລັດວິສາຫະກິດ | 11.943,24 | 12.181,80 | 12.426,22 | 14.242,93 | 14.466,16 |
| ສິນເຊື່ອໃຫ້ພາກເອກະຊົນ | 71.291,31 | 72.399,89 | 74.558,97 | 79.963,20 | 85.733,12 |
| ລາຍການອື່ນໆສຸດທິ | 23.894,47 | 25.695,71 | 26.902,36 | 20.570,50 | 24.666,87 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **114.210,78** | **118.048,65** | **126.952,70** | **138.724,30** | **147.479,46** |
| **ປະລິມານເງິນຄວາມໝາຍແຄບ** | **14.732,46** | **14.726,21** | **15.352,59** | **17.740,61** | **17.132,61** |
| ເງິນຢູ່ນອກລະບົບທະນາຄານ | 8.744,01 | 8.327,26 | 8.932,73 | 10.489,79 | 9.753,51 |
| ເງິນຝາກກະແສລາຍວັນ | 5.988,44 | 6.398,94 | 6.419,86 | 7.250,82 | 7.379,10 |
| **ປະລິມານເງິນປະເພດອື່ນໆ** | **99.478,33** | **103.322,44** | **111.600,11** | **120.983,68** | **130.346,85** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 40.653,99 | 42.540,27 | 44.339,45 | 45.588,30 | 46.859,90 |
| ເງິນຝາກເປັນເງິນຕາຕ່າງປະເທດ | 58.824,34 | 60.782,17 | 67.260,66 | 75.395,39 | 83.486,95 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2021 | ໄຕມາດ 2/2021 | ໄຕມາດ 3/2021 | ໄຕມາດ 4/2021 | ໄຕມາດ 1/2022 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **75.273,63** | **77.500,21** | **82.267,24** | **96.952,91** | **79.754,75** |
| ອັດຕາສ່ວນ (%) | 43,95 | 43,88 | 44,15 | 46,49 | 35,79 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 5,67 | 2,96 | 6,15 | 17,85 | -17,74 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **14.177,90** | **14.194,89** | **14.929,72** | **16.219,62** | **42.818,17** |
| ອັດຕາສ່ວນ (%) | 8,28 | 8,04 | 8,01 | 7,78 | 19,22 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 3,67 | 0,12 | 5,18 | 8,64 | 163,99 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **33.841,12** | **35.432,60** | **37.507,17** | **40.413,66** | **43.753,43** |
| ອັດຕາສ່ວນ (%) | 19,76 | 20,06 | 20,13 | 19,38 | 19,64 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,31 | 4,70 | 5,85 | 7,75 | 8,26 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **47.997,70** | **49.475,94** | **51.632,49** | **54.955,82** | **56.495,16** |
| ອັດຕາສ່ວນ (%) | 28,02 | 28,02 | 27,71 | 26,35 | 25,35 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,99 | 3,08 | 4,36 | 6,44 | 2,80 |
| ລວມທັງໝົດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **171.290,34** | **176.603,63** | **186.336,62** | **208.542,01** | **222.821,50** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 5,04 | 3,10 | 5,51 | 11,92 | 6,85 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate)

| ໄຕມາດ/ປີ | ກີບ/ໂດລາສະຫະລັດ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
| ໄຕມາດ 3/2017 | 8.278,93 | 8.453,34 | **8.366,13** | 250,05 | 252,90 | **251,47** |
| ໄຕມາດ 4/2017 | 8.300,02 | 8.385,83 | **8.342,93** | 254,03 | 255,60 | **254,81** |
| ໄຕມາດ 1/2018 | 8.286,43 | 8.319,52 | **8.302,97** | 264,16 | 264,54 | **264,35** |
| ໄຕມາດ 2/2018 | 8.340,60 | 8.437,98 | **8.389,29** | 263,72 | 265,60 | **264,66** |
